

# ຄະນະພົວພັນຕ່າງປະເທດສູນກາງພັກ

## Committee for External Relations of the Party Central Committee


**I.** ສະພາບການພົ້ນເດັ່ນຂອງບັນດາພັກການເມືອງໃນພາກພື້ນ ແລະ ສາກົນ....................................01 - 03

**II.** ການເຄື່ອນໄຫວຂອງການນຳການຂັ້ນສູງຂອງພັກ ປະຊາຊົນ ປະຕິວັດລາວ................................04

**III.** ການເຄື່ອນໄຫວຂອງ ຄະນະພົວພັນຕ່າງປະເທດສູນກາງພັກ................................................05 - 10


ໃບຂ່າວຂອງຄະນະພົວພັນຕ່າງປະເທດສູນກາງພັກ

ເດືອນ ສິງຫາ 2025


ສຳນັກງານ ຕັ້ງຢູ່ ບ້ານ ສີວິໄລ, ເມືອງໄຊທານີ, ນະຄອນຫຼວງວຽງຈັນ

**Tel: 030 9876030, Email: Ri.dept.la@Gmail.com, Website: www.cerccp.org.la**

# I. ສະພາບການພົ້ນເດັ່ນຂອງບັນດາພັກການເມືອງໃນພາກພື້ນ ແລະ ສາກົນ

## 1. ສະພາບການພົ້ນເດັ່ນຂອງບັນດາພັກການເມືອງຕ່າງປະເທດ

### 1) ພັກກອມມູນິດຫວຽດນາມ

ວັນທີ 17 ສິງຫາ 2025, ຄະນະບໍລິຫານງານສູນກາງພັກກອມມູນິດຫວຽດນາມ, ສະພາແຫ່ງຊາດ, ປະທານປະເທດ, ລັດຖະບານຫວຽດນາມ, ຄະນະກຳມະການສູນກາງແນວໂຮມປະເທດຊາດຫວຽດນາມ ແລະ ຄະນະພັກຕຳຫຼວດສູນກາງ - ກະຊວງຕຳຫຼວດ ໄດ້ຈັດຕັ້ງພິທີສະເຫຼີມສະຫຼອງ 80 ປີ ວັນມູນເຊື້ອຕຳຫຼວດປະຊາຊົນ (19/08/1945 – 19/08/2025) ແລະ ຄົບຮອບ 20 ປີ ຂະບວນການປ້ອງກັນຄວາມສະຫງົບທົ່ວປວງຊົນ (19/08/2005 – 19/08/2025). ສະຫາຍ ໂຕ ເລິມ, ເລຂາທິການໃຫຍ່ ຕາງໜ້າພັກ-ລັດ ໄດ້ປະດັບຫຼຽນໄຊດາວຄຳ ຄັ້ງທີ V ໃຫ້ແກ່ກຳລັງຕຳຫຼວດປະຊາຊົນຫວຽດນາມ ແລະ ໄດ້ກ່າວໃນພິທີວ່າ ຕະຫຼອດໄລຍະ 80 ປີ ຜ່ານມາ ເປັນໄລຍະທາງຍາວນານເພື່ອຢັ້ງຢືນຄວາມກ້າຫານ, ສະຕິປັນຍາ, ການເຕີບໃຫຍ່ຂະຫຍາຍຕົວຂອງກຳລັງຕຳຫຼວດປະຊາຊົນ ພາຍໃຕ້ການນຳພາຢ່າງເດັດຂາດ, ຮອບດ້ານ ແລະ ໂດຍກົງຂອງພັກ; ການຄຸ້ມຄອງຂອງລັດຢ່າງເປັນເອກະພາບ; ການຊ່ວຍເຫຼືອຂອງປະຊາຊົນໃນສະພາບການໂລກ ແລະ ພາກພື້ນໃນປັດຈຸບັນ ສືບຕໍ່ຜັນແປຢ່າງສັບສົນ, ເປັນໜ້າທີ່ຂອງກຳລັງຕຳຫຼວດແຕ່ຫົວທີ; ນອກນັ້ນກຳລັງຕຳຫຼວດປະຊາຊົນຕ້ອງເປັນເຈົ້າການນຳໜ້າໃນການຫັນເປັນດີຈີຕອນ, ຄົ້ນຄວ້າ, ນຳໃຊ້ວິທະຍາສາດ-ເຕັກໂນໂລຢີທັນສະໄໝ ເຂົ້າໃນວຽກງານຕຳຫຼວດ; ຮັບປະກັນຄວາມສະຫງົບປອດໄພ, ຄວາມເປັນລະບຽບຮຽບຮ້ອຍຂອງລະບົບຂໍ້ມູນຂ່າວສານ, ປົກປ້ອງອະທິປະໄຕດີຈີຕອນແຫ່ງຊາດ; ຍູ້ແຮງການຮ່ວມມືກັບສາກົນທາງດ້ານຄວາມໝັ້ນຄົງ, ຍຸຕິທຳ, ແບ່ງປັນຂໍ້ມູນຂ່າວສານ, ສົມທົບກັນກະທຳ; ຕັ້ງໜ້າເຂົ້າຮ່ວມ ແລະ ປະກອບສ່ວນສ້າງລະບຽບຫຼັກການ, ມາດຕະຖານສາກົນໃນຂົງເຂດຄວາມໝັ້ນຄົງທີ່ບໍ່ແມ່ນການທະຫານ.

### 2) ພັກກອມມູນິດຈີນ

ສະຫາຍ ສີ ຈິ້ນຜິງ, ເລຂາທິການໃຫຍ່ ຄະນະກຳມະການສູນກາງພັກກອມມູນິດຈີນ, ປະທານປະເທດ ແຫ່ງ ສປ ຈີນ ໄດ້ໃຫ້ຄຳຊີ້ແຈງ, ຮັບເອົາຄຳຄິດເຫັນ ແລະ ຄຳສະເໜີ ຂອງປະຊາຊົນທີ່ສະແດງອອກຜ່ານສື່ອອນລາຍທັງຫຼາຍ ທີ່ມີຕໍ່ວຽກງານການວາງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 05 ປີຄັ້ງທີ XV ໂດຍເນັ້ນໜັກວ່າ: ການສະແດງຄວາມເຫັນ ກ່ຽວກັບ ວຽກງານວາງແຜນດັ່ງກ່າວ ຜ່ານທາງອິນເຕີເນັດ ແມ່ນພຶດຕິກຳຕົວຈິງທີ່ມີຊີວິດຊີວາ ໃນການພັດທະນາແບບປະຊາທິປະໄຕ ປະຊາຊົນ; ປະຊາຊົນທັງຫຼາຍ ໄດ້ຕັ້ງໜ້າປະກອບຄຳຄິດເຫັນ ແລະ ຄຳສະເໜີທີ່ມີຄຸນຄ່າ, ພາກສ່ວນທີ່ກ່ຽວຂ້ອງ ຕ້ອງຕັ້ງໜ້າຄົ້ນຄວ້າ ແລະ ຮັບໄປພິຈາລະນາ. ຄະນະພັກ ແລະ ອົງການປົກຄອງທຸກຂັ້ນ ຕ້ອງຍຶດໝັ້ນຖືເອົາປະຊາຊົນເປັນໃຈກາງ ຢ່າງສະເໝີຕົ້ນສະເໝີປາຍ, ລົງເລິກສຳຫຼວດສະພາບຕົວຈິງ ຂອງປະຊາຊົນ, ຟັງສຽງຂອງປະຊາຊົນ ແລະ ເຕົ້າໂຮມສະຕິປັນຍາຂອງປະຊາຊົນ ຢ່າງກວ້າງຂວາງ ເພື່ອເຕົ້າໂຮມກຳລັງແຮງສັງລວມອັນເຂັ້ມແຂງ ໃນການຊຸກຍູ້ຄວາມທັນສະໄໝແບບຈີນ ແລະ ເຮັດໃຫ້ຄວາມປາຖະໜາຕໍ່ຊີວິດການເປັນຢູ່ທີ່ດີງາມຂອງປະຊາຊົນ ກາຍເປັນຄວາມຈິງຢ່າງບໍ່ຢຸດຢັ້ງ.

ວັນທີ 08 ສິງຫາ 2025, ສະຫາຍ ສີ ຈິ້ນຜິງ, ປະທານປະເທດ ແຫ່ງ ສປ ຈີນ ໄດ້ສົນທະນາທາງໂທລະສັບກັບທ່ານ ວາລາດີເມຍ ປູຕິນ, ປະທານາທິບໍດີຣັດເຊຍ, ສະຫາຍ ສີ ຈິ້ນຜິງ ກ່າວຢືນຢັນວ່າ ສປ ຈີນ ສົ່ງເສີມການເຈລະຈາສັນຕິພາບ ລະຫວ່າງອູແກຣນ-ຣັດເຊຍ, ມີຄວາມປິຕິຍິນດີ ທີ່ເຫັນວ່າ ສອງຝ່າຍຣັດເຊຍ-ສ.ອາເມຣິກາ ພົບປະກັນເພື່ອແກ້ໄຂບັນຫາ ລະຫວ່າງສອງຝ່າຍ ໃຫ້ດີຂຶ້ນ ແລະ ຊຸກຍູ້ຂະບວນການແກ້ໄຂວິກິດການ ອູແກຣນດ້ວຍວິທີທາງການເມືອງ, ທ່ານ ປູຕິນ ໄດ້ຍ້ອງຍໍຊົມເຊີຍຕໍ່ຈີນ ທີ່ໄດ້ເສີມຂະຫຍາຍບົດບາດຢ່າງສ້າງສັນ ໃນການແກ້ໄຂວິກິດການ ອູແກຣນ ດ້ວຍວິທີທາງການເມືອງ, ພ້ອມທັງຢືນຢັນວ່າ ບໍ່ວ່າຈະຢູ່ໃນສະພາບການຄືແນວໃດ ສາຍພົວພັນຄູ່ປະສານງານຍຸດທະສາດຮອບດ້ານ ລະຫວ່າງ ຣັດເຊຍ-ຈີນ ຈະບໍ່ມີການປ່ຽນແປງ. ປະມຸກລັດສອງປະເທດ ຍັງໄດ້ຕີລາຄາຢ່າງຕັ້ງໜ້າ ຕໍ່ຄວາມໄວ້ເນື້ອເຊື່ອໃຈກັນທາງການເມືອງ ແລະ ການປະສານງານທາງດ້ານຍຸດທະສາດໃນລະດັບສູງ ລະຫວ່າງ ຈີນ-ຣັດເຊຍ, ພ້ອມທັງເຫັນດີເປັນເອກະພາບ ຈະຮ່ວມກັນຊຸກຍູ້ການພົວພັນ ລະຫວ່າງສອງປະເທດ ໃຫ້ໄດ້ຮັບການຂະຫຍາຍຕົວໃຫຍ່ຫຼວງກວ່າເກົ່າ. ສອງຝ່າຍ ຈະຮ່ວມມືກັນຢ່າງເຕັມຄວາມສາມາດ ໃນການກະກຽມຈັດກອງປະຊຸມສຸດຍອດອົງການຮ່ວມມືຊຽງໄຮ້ ເຊິ່ງຈະຈັດຂຶ້ນຢູ່ ນະຄອນທຽນຈິນ, ສປ ຈີນ ເພື່ອໃຫ້ເປັນກອງປະຊຸມສຸດຍອດຄັ້ງໜຶ່ງ ທີ່ມີມິດຕະພາບ, ຄວາມສາມັກຄີ ແລະ ມີໝາກຜົນອັນອຸດົມສົມບູນ, ທັງຊຸກຍູ້ອົງການຮ່ວມມືຊຽງໄຮ້ ບັນລຸການພັດທະນາທີ່ມີຄຸນນະພາບສູງ.

## 2. ຂ່າວພົ້ນເດັ່ນໃນພາກພື້ນ ແລະ ສາກົນ

### 1) ພາກພື້ນອາຊີ-ປາຊີຟິກ ແລະ ອາຟຣິກາ

**ຂໍ້ຂັດແຍ່ງລະຫວ່າງໄທ-ກຳປູເຈຍ:**ເພື່ອແກ້ໄຂບັນຫາຊາຍແດນຮ່ວມກັນ, ໃນວັນທີ 07 ສິງຫາ 2025, ຄະນະຜູ້ແທນຈາກໄທ-ກຳປູເຈຍ ໄດ້ຈັດກອງປະຊຸມຄະນະກຳມະການຊາຍແດນທົ່ວໄປ (GBC) ທີ່ນະຄອນຫຼວງກົວລາລຳເປີ, ປະເທດມາເລເຊຍ ໂດຍມີຜູ້ແທນຈາກເມເລເຊຍ, ສປ ຈີນ ແລະ ສ.ອາເມຣິກາ ເຂົ້າຮ່ວມເປັນພະຍານ. **ສອງຝ່າຍເຫັນດີຮ່ວມກັນ 13 ຂໍ້:** 01) ຢຸດການໃຊ້ອາວຸດທຸກປະເພດ, ຢຸດໂຈມຕີພົນລະເຮືອນ ແລະ ເປົ້າໝາຍທາງທະຫານທຸກພື້ນທີ່ ໃນທຸກກໍລະນີ. 02) ຮັກສາສະຖານະການວາງກຳລັງໃນທີ່ຕັ້ງປັດຈຸບັນ ນັບແຕ່ວັນທີ 28 ກໍລະກົດ 2025 ເປັນຕົ້ນໄປ; 03) ຫ້າມເພີ່ມກຳລັງທະຫານຕາມເຂດຊາຍແດນ; 04) ຫ້າມເຄື່ອນໄຫວຍຸແຍ່ເພື່ອໃຫ້ເກີດຄວາມເຄັ່ງຕຶງຕາມຂໍ້ຕົກລົງຢຸດຍິງ ແລະ ຫ້າມກໍ່ສ້າງໂຄງສ້າງພື້ນຖານທາງທະຫານເກີນເຂດຊາຍແດນຂອງຕົນ; 05) ຫ້າມໃຊ້ກຳລັງຕໍ່ພົນລະເຮືອນໃນທຸກກໍລະນີ; 06) ປະຕິບັດຕາມອະນຸສັນຍາເຈນີວາ ກ່ຽວກັບ ການປະຕິບັດຕໍ່ຜູ້ຖືກຈັບຕົວ, ຜູ້ບາດເຈັບເພື່ອມາຮັກສາປິ່ນປົວ ສ່ວນທະຫານທີ່ເປັນສະເລີຍເສິກ ຕ້ອງຖືກປ່ອຍຕົວ ພາຍຫຼັງຢຸດຍິງ ພ້ອມທັງອຳນວຍຄວາມສະດວກໃນການສົ່ງຄືນສົບ ຢ່າງສົມກຽດໂດຍໄວ ແລະ ສົ່ງສົບຕາມລັກສະນະເດີມ; 07) ກໍລະນີມີຂໍ້ຂັດແຍ່ງລະຫວ່າງສອງຝ່າຍດ້ວຍການໃຊ້ອາວຸດທັງເຈດຕະນາ ແລະ ບໍ່ເຈດຕະນາ ສອງຝ່າຍຈະຕ້ອງປຶກສາຫາລືກັນຜ່ານກົນໄກພາຄີທີ່ມີຢູ່ ເພື່ອປ້ອງກັນການຂະຫຍາຍຕົວ ຂອງສະຖານະການ; 08) ສືບຕໍ່ປະສານງານ ລະຫວ່າງ ທະຫານສອງຝ່າຍໃນພື້ນທີ່, ຈັດການປະຊຸມເຈົ້າໜ້າທີ່ຮັບຜິດຊອບແຕ່ລະພື້ນທີ່ ພາຍໃນສອງອາທິດ ນັບຈາກການປະຊຸມ GBC ໃນວັນທີ 07 ສິງຫາ 2025, ສ້າງຊ່ອງທາງຕິດຕໍ່ກັນລະດັບລັດຖະມົນຕີ ແລະ ຜູ້ບັນຊາການທະຫານສູງສຸດ ຂອງສອງຝ່າຍ; 09) ຫ້າມເຜີຍແຜ່ຂໍ້ມູນຂ່າວສານທີ່ບໍ່ແມ່ນຄວາມຈິງ; 10) ສອງຝ່າຍຕ້ອງປະຕິບັດຕາມຜົນການປະຊຸມ ໃນວັນທີ 28 ກໍລະກົດ 2025 ຊຶ່ງລວມມີຄະນະຜູ້ສັງເກດການຈາກປະເທດສະມາຊິກອາຊຽນ ນຳໂດຍມາເລເຊຍ; 11) ໃຫ້ເຈົ້າໜ້າທີ່ ຮັບຜິດຊອບແຕ່ລະພື້ນທີ່ ຂອງສອງຝ່າຍ ປະຕິບັດຕາມຂໍ້ຕົກລົງຢຸດຍິງ ໂດຍມີຄະນະຜູ້ສັງເກດການອາຊຽນ ຮ່ວມກັບມາເລເຊຍ; 12) ໃນລະຫວ່າງການຈັດຕັ້ງຄະນະຜູ້ສັງເກດການອາຊຽນທີ່ມີມາເລເຊຍເປັນຜູ້ນຳ ຈະໃຊ້ກົນໄກຜູ້ສັງເກດການຊົ່ວຄາວ ຊຶ່ງມີທູດທະຫານ ຂອງປະເທດສະມາຊິກອາຊຽນປະຈຳໄທ-ກຳປູເຈຍ ປະຕິບັດໜ້າທີ່ຊົ່ວຄາວ; 13) ໃຫ້ຈັດການປະຊຸມ GBC ພາຍໃນ 01 ເດືອນ ນັບແຕ່ວັນທີ 07 ສິງຫາ 2025 ເປັນຕົ້ນໄປ.

ວັນທີ 16 ສິງຫາ 2025, ທະຫານໄທ ແລະ ກຳປູເຈຍ ໄດ້ຈັດກອງປະຊຸມພິເສດ ເພື່ອປຶກສາຫາລື ກ່ຽວກັບການຮັກສາຄວາມສະຫງົບ ຢູ່ເຂດຊາຍແດນຂອງສອງປະເທດ, ສືບຕໍ່ສະໜັບສະໜູນສ້າງກົນໄກຕິດຕາມກວດກາຕາມເຂດຊາຍແດນ ຕາມຂໍ້ຕົກລົງ 13 ຂໍ້ ແລະ ເຫັນດີຮັກສາການຕິດຕໍ່ພົວພັນກັນເປັນປະຈຳ ລະຫວ່າງ ທະຫານລຽບຊາຍແດນໄທ-ກຳປູເຈຍ ພ້ອມທັງພະຍາຍາມຫຼີກລ່ຽງການປະທະກັນ ແລະ ແກ້ໄຂບັນຫາຕ່າງໆໂດຍສັນຕິ ເພື່ອໃຫ້ມີການຟື້ນຟູການພົວພັນຮ່ວມມືຄວາມໄວ້ເນື້ອເຊື່ອໃຈ ເຊິ່ງກັນ ແລະ ກັນ. ພ້ອມນັ້ນ, ສອງຝ່າຍ ເຫັນດີປະຕິບັດຕໍ່ຊະເລີຍເສິກໂດຍອີງຕາມກົດໝາຍ ວ່າດ້ວຍມະນຸດສະທຳສາກົນ; ເຫັນດີໃຫ້ອາຊຽນ ສົ່ງຜູ້ສັງເກດການ ເພື່ອຕິດຕາມການປະຕິບັດຕົກລົງຢຸດຍິງ ລະຫວ່າງສອງຝ່າຍ. ປັດຈຸບັນ, ສອງຝ່າຍ ກຳລັງດຳເນີນວຽກງານປັກຫຼັກໝາຍ ຊາຍແດນ ໂດຍຄະນະກຳມະການຊາຍແດນຮ່ວມຂອງສອງປະເທດ ສາມາດເກັບກູ້ລະເບີດຝັງດິນ ຕາມຊາຍແດນ ທີ່ຕົກລົງກັນກ່ອນໜ້ານີ້.

**ການເມືອງມຽນມາ:** ວັນທີ 01 ສິງຫາ 2025, ລັດຖະບານຊຸດໃໝ່ ຂອງສະຫະພາບມຽນມາໄດ້ຈັດກອງປະຊຸມຄັ້ງປະຖົມມະລຶກ ໂດຍການເປັນປະທານ ຂອງທ່ານ ອູຢໍຊໍ, ນາຍົກລັດຖະມົນຕີມຽນມາ ຄົນໃໝ່, ມີບັນດາລັດຖະມົນຕີ, ຮອງລັດຖະມົນຕີ ພ້ອມດ້ວຍເຈົ້າໜ້າທີ່ຕ່າງໆ ເຂົ້າຮ່ວມ. ທ່ານ ອູຢໍຊໍ ກ່າວຄຳປາໄສວ່າ: ລັດຖະບານຕ້ອງປະຕິບັດ ແລະ ປົກປັກຮັກສາບໍ່ໃຫ້ສະຫະພາບມຽນມາຫຼົ້ມສະຫຼາຍ, ປົກປັກຮັກສາຄວາມສາມັກຄີ ລະຫວ່າງຊົນເຜົ່າກໍຄືຄວາມໝັ້ນຄົງດ້ານອະທິປະໄຕຢ່າງເປັນບຸລິມະສິດ, ຕ້ອງປະຕິບັດຕາມເປົ້າໝາຍ 04 ຢ່າງ ທີ່ວາງອອກໂດຍຄະນະກຳມະການປ້ອງກັນປະເທດ ແລະ ຄວາມໝັ້ນຄົງມຽນມາ; ພ້ອມທັງຮຽກຮ້ອງໃຫ້ປະຊາຊົນຈົ່ງຢູ່ຮ່ວມກັນໂດຍສັນຕິ ບົນເສັ້ນທາງປະຊາທິປະໄຕ ທີ່ມີຫຼາຍພັກການເມືອງ. ວັນທີ 18 ສິງຫາ 2025, ລັດຖະບານມຽນມາ ໄດ້ປະກາດວ່າ ການເລືອກຕັ້ງໄລຍະທຳອິດ ຈະຈັດຂຶ້ນໃນວັນທີ 28 ທັນວາ 2025. ການເລືອກຕັ້ງຄັ້ງນີ້ ມີພັກການເມືອງລົງທະບຽນເຂົ້າຮ່ວມແລ້ວ ປະມານ 55 ພັກ, ໃນນີ້ 09 ພັກ ໄດ້ວາງແຜນຈະລົງແຂ່ງຂັນຊິງບ່ອນນັ່ງໃນທົ່ວປະເທດ.

ວັນທີ 12 ສິງຫາ 2025, ທ່ານ ອັນວາ ອິບບາຮິມ, ນາຍົກລັດຖະມົນຕີມາເລເຊຍ ໃນນາມປະທານອາຊຽນ ປີ 2025 ໄດ້ຖະແຫຼງຮ່ວມກັບ ທ່ານ ໂມຮາມັດ ຢູນຸສ, ປະທານຄະນະທີ່ປຶກສາລັດຖະບານຊົ່ວຄາວ ຂອງບັງກລາເທດ ຂະນະທີ່ ເດີນທາງຢ້ຽມຢາມມາເລເຊຍ ຊຶ່ງບັນດາປະເທດສະມາຊິກອາຊຽນ ຈະຄະນະຜູ້ແທນໄປມຽນມາ ເພື່ອສົ່ງເສີມ ສັນຕິພາບ ແລະ ຊ່ວຍຜູ້ປະສົບໄພຈາກແຜ່ນດິນໄຫວ ແລະ ຊ່ວຍເຫຼືອດ້ານມະນຸດສະທຳ ແກ່ຜູ້ລີ້ໄພຊາວໂລຮິງຢາ ໃນມຽນມາ ທີ່ອາໄສຢູ່ຄ້າຍຜູ້ລີ້ໄພໃນບັງກລາເທດ. ຊາວໂລຮິງຢາ ປະມານ 01 ລ້ານຄົນ ທີ່ໜີໄພຈາກການສູ້ຮົບ ແລະ ການປາບປາມ ຈາກກອງທັບມຽນມາ ອາໄສຢູ່ຫຼາຍແຫ່ງ ໃນເມືອງຄ໋ອກບາຊາ, ບັງກລາເທດ ຊຶ່ງເປັນຄ້າຍຜູ້ລີ້ໄພໃຫຍ່ທີ່ສຸດໃນໂລກ.

**2) ພາກພື້ນເອີຣົບ-ອາເມຣິກາ**

**ບັນຫາອູແກຣນ-ຣັດເຊຍ:** ອູແກຣນ ແລະ ຣັດເຊຍ ຍັງສືບຕໍ່ໂຈມຕີກັນໄປມາຢ່າງໜັກໜ່ວງ ຊຶ່ງຣັດເຊຍເນັ້ນການໂຈມຕີທາງພາກຕາເວັນອອກ ຂອງອູແກຣນ ພ້ອມທັງກ່າວວ່າ ທຸກຝ່າຍຕ້ອງຍອມຮັບ ພາກພື້ນລູຮັນ, ໂດເນັດ, ສະປໍຣັດເຊຍ, ເຄີຊອນ ທາງພາກຕາເວັນອອກ ຂອງອູແກຣນ ເປັນສ່ວນໜຶ່ງຂອງຣັດເຊຍແລ້ວ. ສ່ວນອູແກຣນກໍໄດ້ສົ່ງໂດຣນ ເພື່ອໂຈມຕີນະຄອນຫຼວງມົດສະກູ ຂອງຣັດເຊຍ ແຕ່ຖືກຣັດເຊຍສະກັດໄວ້ໄດ້. ຢ່າງໃດກໍຕາມ ອູແກຣນຢືນຢັນວ່າ ຈະບໍ່ຍອມເສຍດິນແດນໃນພາກພື້ນດອນບາສ໌ ທາງພາກຕາເວັນອອກ ເພື່ອແລກກັບຂໍ້ຕົກລົງຢຸດຍິງ. ແນວໃດກໍຕາມ, ທັງຣັດເຊຍ ແລະ ອູແກຣນ ຕ່າງກໍຢາກໃຫ້ຄວາມຂັດແຍ່ງນັ້ນ ຢຸດຕິລົງ.

ຊຶ່ງໃນໃນວັນທີ 15 ສິງຫາ 2025, ທ່ານ ໂດນັນ ທຣຳ, ປະທານາທິບໍດີ ສ.ອາເມຣິກາ ໄດ້ພົບປະກັບ ທ່ານ ວະລາດິເມຍ ປູຕິນ, ປະທານາທິບໍດີຣັດເຊຍ, ທີ່ລັດ Alaska ສ. ອາເມຣິກາ. ສອງຝ່າຍ ໄດ້ຖະແຫຼງຮ່ວມກັນວ່າ ການເຈລະຈາມີຄວາມຄືບໜ້າໄປໃນທິດທາງທີ່ດີ ຊຶ່ງອາດນຳໄປສູ່ການພົບປະຄັ້ງຕໍ່ໄປ. ແນວໃດກໍຕາມ, ການປະຊຸມຄັ້ງນີ້ບໍ່ມີການຕົກລົງທີ່ເປັນຮູບປະທຳ. ຫຼັງຈາກນັ້ນ ໃນວັນທີ 18 ສິງຫາ 2025, ທ່ານ ວາລາດິເມຍ ເຊເລນສະກີ, ປະທານາທິບໍດີອູແກຣນ ໄດ້ເດີນທາງໄປ ສ.ອາເມຣິກາ ເພື່ອປຶກສາຫາລືການຢຸດຄວາມຂັດແຍ່ງໃນອູແກຣນ ໂດຍມີຜູ້ນຳຈາກເອີຣົບເຂົ້າຮ່ວມນຳ, ຊຶ່ງ ທ່ານ ທຣຳ ໄດ້ຢັ້ງຢືນວ່າ ຈະຊ່ວຍຄ້ຳປະກັນຄວາມໝັ້ນຄົງຂອງອູແກຣນ, ແຕ່ ທ່ານ ທຣຳ ມີຄວາມເຫັນແຕກຕ່າງ ຕໍ່ການຢຸດຍິງ ໂດຍກ່າວວ່າ ບໍ່ຈຳເປັນຕ້ອງມີການຢຸດຍິງກ່ອນ ເພື່ອເລີ່ມການເຈລະຈາສັນຕິພາບ ເນື່ອງຈາກ ອາດເຮັດໃຫ້ຝ່າຍໃດຝ່າຍໜຶ່ງເສຍປຽບທາງດ້ານຍຸດທະສາດ, ສ່ວນບັນດາຜູ້ນຳເອີຣົບ ໄດ້ສະແດງທ່າທີ່ຄັດຄ້ານ ແລະ ວ່າ ກອງປະຊຸມຄັ້ງຕໍ່ໄປ ຈະບໍ່ສາມາດເກີດຂຶ້ນໄດ້ຖ້າຫາກບໍ່ມີການຢຸດຍິງ ແລະ ເອີຣົບຕ້ອງມີສ່ວນຮ່ວມຢ່າງໃກ້ຊິດໃນທຸກຂັ້ນຕອນຂອງເຈລະຈາ. ພາຍຫຼັງສຳເລັດການພົບປະ ທ່ານ ທຣຳ ໄດ້ໂທລະສັບຫາ ທ່ານ ປູຕິນ ເພື່ອລິເລີ່ມການຈັດຕັ້ງການເຈລະຈາ ລະຫວ່າງຣັດເຊຍ ແລະ ອູແກຣນ. ພ້ອມດຽວກັນນັ້ນ, ບັນດາປະເທດຕາເວັນຕົກ ລວມທັງສະຫະພາບເອີຣົບ ອອກຖະແຫຼງການ ຈະສືບຕໍ່ສົ່ງອາວຸດຍຸດໂທປະກອນ ແລະ ຈະສະໜັບສະໜູນການເຂົ້າເປັນສະມາຊິກນາໂຕ້ ຂອງອູແກຣນຕໍ່ໄປ.

**3) ພາກພື້ນຕາເວັນອອກກາງ**

**ສະພາບການ ໃນເຂດກາຊາ**: ໃນວັນທີ 04 ສິງຫາ 2025, ກອງທັບອິດສະຣາແອນ ຍັງດຳເນີນການໂຈມຕີເຂດກາຊາ ຢ່າງໜັກໜ່ວງ ເພື່ອບັນລຸຈຸດປະສົງ 03 ດ້ານ ໂດຍບໍ່ມີຂໍ້ຍົກເວັ້ນ ຄື: ການເອົາຊະນະສັດຕູ, ການຊ່ວຍເຫຼືອຕົວປະກັນ ແລະ ການປະຕິບັດເພື່ອໃຫ້ແນ່ໃຈວ່າ ເຂດກາຊາຈະບໍ່ເປັນໄພຄຸກຄາມຕໍ່ອິດສະຣາແອນອີກຕໍ່ໄປ ແລະ ໃນວັນທີ 08 ສິງຫາ 2025 ອິດສະຣາແອນ ສະເໜີ 05 ຂໍ້ ເພື່ອຢຸດຍິງໃນເຂດກາຊາ: 01) ກຸ່ມຮາມາສຕ້ອງວາງອາວຸດ; 02) ຕ້ອງສົ່ງຕົວປະກັນທັງໝົດທີ່ມີຊີວິດ ແລະ ເສຍຊີວິດ; 03) ເຂດກາຊາຕ້ອງປອດທະຫານ; 04) ອິດສະຣາແອນ ຈະຕ້ອງເຂົ້າມາຄວາມຄຸມຄວາມໝັ້ນຄົງໃນເຂດກາຊາ; 05) ຕ້ອງມີລັດຖະບານທີ່ບໍ່ແມ່ນກຸ່ມຮາມາສ ຫຼື ອົງກອນບໍລິຫານປາແລັດສະຕິນ ສ່ວນກຸ່ມຮາມາສໄດ້ປະຕິເສດຢ່າງເດັດ. ໃນຂະນະທີ່ກຸ່ມຮາມາສ ກໍມີຂໍ້ສະເໜີຕໍ່ອິດສະຣາແອນ ເພື່ອຢຸດຍິງ, ແຕ່ ກໍຖືກປະຕິເສດເຊັ່ນກັນ. ສັງລວມແລ້ວສະຖານະການໃນເຂດກາຊາ ຍັງຈະສືບຕໍ່ຮຸນແຮງຕໍ່ໄປ, ທັງການສູນເສຍພົນລະເຮືອນ ແລະ ສະພາບຂາດແຄນດ້ານມະນຸດຊະທຳ ຈົນກວ່າອິດສະຣາແອນຈະສາມາດຍຶດກາຊາໄດ້ສົມບູນ. ການໂຈມຕີເຂດກາຊາຂອງອິດສະຣາແອນ ໃນວັນທີ 10 ສິງຫາ 2025 ເຮັດໃຫ້ມີນັກຂ່າວ ສຳນັກ Al Jazeera ເສຍຊີວິດ 05 ຄົນ ຈາກການໂຈມຕີທາງອາກາດໃສ່ໂຮງໝໍ Al-Shifa ທີ່ເຂດກາຊາ. ຂະນະທີ່, ກອງທັບອິດສະຣາແອນ ອ້າງວ່າ ການໂຈມຕີນີ້ແມ່ນເພື່ອສັງຫານ ສະມາຊິກກຸ່ມຮາມາສ ທີ່ປອມຕົວເປັນນັກຂ່າວ. ກະຊວງສາທາລະນະສຸກ ຂອງກາຊາ ລາຍງານວ່າ ນັບແຕ່ເກີດຄວາມຂັດແຍ່ງ ລະຫວ່າງ ອິດຣາແອນ ແລະ ປາແລັດສະຕິນ ເຮັດໃຫ້ມີຜູ້ເສຍຊີວິດ 61.599 ຄົນ, ບາດເຈັບ 154.088 ຄົນ ນັບແຕ່ 07 ຕຸລາ 2023 ເປັນຕົ້ນມາ.

## II. ການເຄື່ອນໄຫວຂອງການນຳການຂັ້ນສູງຂອງພັກ ປະຊາຊົນ ປະຕິວັດລາວ

### 1) ຜູ້ປະຈຳການ ຄະນະເລຂາທິການສູນກາງພັກ ຕ້ອນຮັບການເຂົ້າຢ້ຽມຂໍ່ານັບຂອງ ຄະນະຜູ້ແທນ ເຂດປົກຄອງຕົນເອງເຜົ່າຈ້ວງກວາງຊີ, ສປ ຈີນ ຢ້ຽມຢາມ ແລະ ເຮັດວຽກຢູ່ ສປປ ລາວ



ໃນຕອນບ່າຍວັນທີ 19 ສິງຫາ 2025, ສະຫາຍ ໂຈ ຢີ້ເຈ, ຮອງຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກກອມມູນິດຈີນ ພ້ອມດ້ວຍຄະນະ ໄດ້ເຂົ້າຢ້ຽມຂໍ່ານັບ ສະຫາຍ ບຸນທອງ ຈິດມະນີ, ກຳມະການກົມການເມືອງ, ຜູ້ປະຈຳການ ຄະນະເລຂາທິການສູນກາງພັກ, ຮອງປະທານປະເທດ ແຫ່ງ ສປປ ລາວ, ໃນໂອກາດດັ່ງກ່າວ ສະຫາຍ ບຸນທອງ ຈິດມະນີ ໄດ້ສະແດງຄວາມຊົມເຊີຍ ການມາຢ້ຽມຢາມ ແລະ ເຮັດວຽກ ຢູ່ ສປປ ລາວ ຂອງຄະນະໃນຄັ້ງນີ້, ເຊິ່ງເປັນການປະກອບສ່ວນສຳຄັນເຂົ້າໃນການເສີມຂະຫຍາຍສາຍພົວພັນມິດຕະພາບ ອັນເປັນມູນເຊື້ອ ແລະ ການຮ່ວມມືຍຸດທະສາດ ຮອບດ້ານ ໝັ້ນຄົງຍາວນານ ຕາມທິດ 4 ດີ ແລະ ການເປັນຄູ່ຮ່ວມຊາຕາກຳ ລະຫວ່າງ 2 ພັກ, 2 ລັດ ແລະ ປະຊາຊົນສອງຊາດ ລາວ-ຈີນ ເວົ້າລວມ, ໂດຍສະເພາະ ລະຫວ່າງ ສປປ ລາວ ກັບເຂດກວາງຊີ ໃຫ້ໄດ້ຮັບການຂະຫຍາຍເຂົ້າສູ່ລວງເລິກ ແລະ ແຕກດອກອອກຜົນຍິ່ງໆຂຶ້ນ. ຕີລາຄາສູງ ຕໍ່ ການພົວພັນຮ່ວມມືສອງຝ່າຍ ສປປ ລາວ ກັບ ເຂດປົກຄອງຕົນເອງເຜົ່າຈ້ວງກວາງຊີ ໄດ້ມີມູນເຊື້ອການພົວພັນ, ແລກປ່ຽນການໄປມາຫາສູ່ ລະຫວ່າງ ການນຳຂັ້ນສູງຂອງສອງຝ່າຍ ຢ່າງເປັນປົກກະຕິ, ການຊ່ວຍເຫລືອໃນການຝຶກອົບຮົມກໍ່ສ້າງພະນັກງານລາວ ຢູ່ຈີນ ຂອງພັກກອມມູນິດຈີນ, ກໍ່ຄື ອຳນາດການປົກຄອງເຂດປົກຄອງຕົນເອງເຜົ່າຈ້ວງກວາງຊີ ແກ່ ສປປ ລາວ. ຍິນດີ ສືບຕໍ່ສາຍພົວພັນມິດຕະພາບອັນເປັນມູນເຊື້ອ ແລະ ການຮ່ວມມືທາງ ດ້ານເສດຖະກິດ, ການຄ້າ, ການລົງທຶນ, ການສຶກສາ, ກະສິກຳ ແລະ ຂົງເຂດອື່ນໆ ລະຫວ່າງ ສປປ ລາວ ກັບ ເຂດກວາງຊີ ໄດ້ຮັບການເສີມຂະຫຍາຍຢ່າງຕໍ່ເນື່ອງ ແລະ ເຂົ້າສູ່ລວງເລິກເປັນກ້າວໆ. ພ້ອມທັງ ສະໜັບສະໜູນ ແລະ ເຂົ້າຮ່ວມ ໃນການຈັດງານວາງສະແດງສິນຄ້າ ຈີນ-ອາຊຽນ ທີ່ຝ່າຍຈີນເປັນເຈົ້າພາບຈັດຂຶ້ນໃນທ້າຍປີນີ້.

ສະຫາຍ ໂຈ ຢີ້ເຈ ໄດ້ສະແດງຄວາມຂອບໃຈຕໍ່ ສະຫາຍ ບຸນທອງ ຈິດມະນີ ທີ່ໃຫ້ກຽດຕ້ອນຮັບຄະນະ ແລະ ໄດ້ແຈ້ງສະພາບພົ້ນເດັ່ນຂອງ ສປ ຈີນ ໃຫ້ຊາບ, ຕີລາຄາສູງ ການພົວພັນຮ່ວມມືສອງຝ່າຍໃນໄລຍະຜ່ານມາ, ພ້ອມທັງໄດ້ສະເໜີບາງທິດທາງແຜນການໃນຕໍ່ໜ້າ ໃນການສືບຕໍ່ຈັດຕັ້ງປະຕິບັດ ບັນດາເນື້ອໃນຈິດໃຈທີ່ການນຳຂັ້ນສູງສອງພັກ, ສອງລັດ ໄດ້ຕົກລົງເປັນເອກະພາບກັນໃນຜ່ານມາ ໃນການຈັດຕັ້ງປະຕິບັດ ແຜນແມ່ບົດວ່າດ້ວຍການສ້າງຄູ່ຮ່ວມຊາຕາກຳ ລາວ-ຈີນ ແລະ ແຜນການຮ່ວມມື ລະຫວ່າງ ສອງພັກ ກໍ່ຄື ແຜນການຮ່ວມມືສະບັບໃໝ່ ລະຫວ່າງ ຄະນະພົວພັນຕ່າງປະເທດສູນກາງພັກ ແລະ ຄະນະພັກກອມມູນິດ ເຂດປົກຄອງຕົນເອງເຜົ່າຈ້ວງກວາງຊີ ໃຫ້ມີປະສິດທິຜົນສູງກວ່າເກົ່າ.

ໃນໂອກາດນີ້, ສະຫາຍ ໂຈ ຢີ້ເຈ ພ້ອມດ້ວຍຄະນະ ຍັງໄດ້ພົບປະເຮັດວຽກກັບ ສະຫາຍ ວາລະໄຊ ເລັ່ງສະຫວັດ, ຮອງຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ; ພົບປະເຮັດວຽກກັບ ຄະນະນຳ ກະຊວງອຸດສາຫະກຳ ແລະ ການຄ້າ ແລະ ກະຊວງເຕັກໂນໂລຊີ ແລະ ການສື່ສານ. ພ້ອມນັ້ນ ຄະນະຍັງໄດ້ເດີນທາງໄປ ຢ້ຽມຢາມແຂວງຫຼວງພະບາງ ແລະ ພົບປະກັບ ການນຳແຂວງຫຼວງພະບາງ ໃນໂອກາດດັ່ງກ່າວ.

## III. ການເຄື່ອນໄຫວຂອງ ຄະນະພົວພັນຕ່າງປະເທດສູນກາງພັກ.

**1) ຄະນະພົວພັນຕ່າງປະເທດສູນກາງພັກ ຈັດພິທີປະກາດການແຕ່ງຕັ້ງ ເລຂາຄະນະພັກ, ຫົວໜ້າ ຄຕພ**




ພິທີປະກາດການແຕ່ງຕັ້ງ ເລຂາຄະນະບໍລິຫານງານພັກ, ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ ໄດ້ຈັດຂຶ້ນ ໃນວັນທີ 12 ສິງຫາ 2025, ທີ່ສຳນັກງານ ຄຕພ ໂດຍການເປັນປະທານຂອງ ສະຫາຍ ປອ ນ. ສູນທອນ ໄຊຍະຈັກ, ເລຂາທິການສູນກາງພັກ, ຮອງປະທານສະພາແຫ່ງຊາດ; ມີບັນດາຜູ້ຕາງໜ້າ ຈາກອົງການຂອງພັກ, ກະຊວງການຕ່າງປະເທດ; ມີບັນດາສະຫາຍ ໃນຄະນະພັກ, ຄະນະກົມ ຕະຫຼອດຮອດສະມາຊິກພັກທັງໝົດເຂົ້າຮ່ວມ ຢ່າງພ້ອມພຽງ.

ໃນພິທີ, ສະຫາຍ ນາງກັນຍາ ແສງແກ້ວວົງພະຈັນ, ຮອງຫົວໜ້າກົມຄຸ້ມຄອງພະນັກງານ ໄດ້ຕາງໜ້າ ຄະນະຈັດຕັ້ງສູນກາງພັກ ໄດ້ຜ່ານມະຕິ ເລກທີ 22/ກມສພ,ລົງວັນທີ 04 ສິງຫາ 2025 ວ່າດ້ວຍການແຕ່ງຕັ້ງ ສະຫາຍ ບຸນເຫຼືອ ພັນດານຸວົງ, ຮັກສາການເລຂາຄະນະບໍລິຫານງານພັກ, ຮັກສາການຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ ເປັນເລຂາຄະນະບໍລິຫານງານພັກ, ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ.

ສະຫາຍ ປອ ນ. ສູນທອນ ໄຊຍະຈັກ, ໄດ້ໃຫ້ກຽດມອບມະຕິດັ່ງກ່າວໃຫ້ ສະຫາຍ ບຸນເຫຼືອ ພັນດານຸວົງ, ທັງໄດ້ມີຄຳເຫັນໂອ້ລົມ ແລະ ສະແດງຄວາມຊົມເຊີຍຕໍ່ ສະຫາຍ ບຸນເຫຼືອ ພັນດານຸວົງ ທີ່ໄດ້ຮັບການແຕ່ງຕັ້ງເປັນເລຂາຄະນະບໍລິຫານງານພັກ, ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ ເຊິ່ງສະແດງໃຫ້ເຫັນເຖິງຄວາມເຊື່ອໝັ້ນ ແລະ ຄວາມໄວ້ວາງໃຈຂອງ ກົມການເມືອງສູນກາງພັກ ແລະ ຄະນະເລຂາທິການສູນກາງພັກ ຕໍ່ກັບການປະຕິບັດໜ້າທີ່ຂອງ ສະຫາຍ ບຸນເຫຼືອ ພັນດານຸວົງ ໃນໄລຍະຜ່ານມາ. ສະຫາຍ ປອ ນ. ສູນທອນ ຍັງໄດ້ໃຫ້ທິດເນື່ອງທາງ ແລະ ຊີ້ນຳຕໍ່ການປະຕິບັດໜ້າທີ່ການເມືອງໃນຕໍ່ໜ້າ, ລວມທັງການນຳພາ-ຊີ້ນຳການດຳເນີນກອງປະຊຸມໃຫຍ່ສະມາຊິກພັກ ຄັ້ງທີ III ຂອງອົງຄະນະພັກ ຄຕພ ໃຫ້ບັນລຸຜົນສຳເລັດຢ່າງຈົບງາມ.

**2) ອົງຄະນະພັກ ຄຕພ ທາບທາມຮ່າງເນື້ອໃນເອກະສານ ແລະ ບຸກຄະລາກອນ ຮອບທີ 1 ແລະ ຮອບທີ 2**




ໃນວັນທີ 04 ແລະ 12 ສິງຫາ 2025 ຄະນະພົວພັນຕ່າງປະເທດສູນກາງພັກ, ໄດ້ຈັດກອງປະຊຸມທາບທາມຮ່າງເນື້ອໃນເອກະສານ ແລະ ບຸກຄະລາກອນ ຮອບທີ 1 ແລະ ຮອບທີ 2 ເພື່ອກະກຽມໃຫ້ແກ່ການດຳເນີນກອງປະຊຸມໃຫຍ່ສະມາຊິກພັກຂອງອົງຄະນະພັກ ຄະນະພົວພັນຕ່າງປະເທດສູນກາງພັກ ຄັ້ງທີ III, ໂດຍການເປັນປະທານຂອງ ສະຫາຍ ບຸນເຫຼືອ ພັນດານຸວົງ, ເລຂາຄະນະບໍລິຫານງານພັກ, ຫົວໜ້າ ຄະນະພົວພັນຕ່າງປະເທດສູນກາງພັກ ແລະ

ເປັນກຽດເຂົ້າຮ່ວມຂອງ ສະຫາຍ ປອ ນາງ ສູນທອນ ໄຊຍະຈັກ, ເລຂາທິການສູນກາງພັກ, ຮອງປະທານສະພາແຫ່ງຊາດ, ຜູ້ຊີ້ນຳກອງປະຊຸມໃຫຍ່ສະມາຊິກພັກ ຄຕພ, ມີບັນດາສະຫາຍຄະນະບໍລິຫານງານພັກ ຄຕພ, ຜູ້ຕາງໜ້າຈາກຄະນະກວດກາສູນກາງພັກ, ຄະນະຈັດຕັ້ງສູນກາງພັກ, ຄະນະໜ່ວຍພັກ ແລະ ສະມາຊິກພັກສົມບູນທົ່ວ ຄຕພ ເຂົ້າຮ່ວມ. ໃນພິທີສະຫາຍ ບຸນເຫຼືອ ພັນດານຸວົງ ໄດ້ກ່າວເປີດກອງປະຊຸມ ໂດຍເນັ້ນວ່າ: ການທາບທາມຄັ້ງນີ້ ແມ່ນປະຕິບັດຕາມກົດລະບຽບຂອງພັກ ເປັນ ຕົ້ນແມ່ນເຮັດໃຫ້ການທາບທາມດຳເນີນໄປຢ່າງຖືກຕ້ອງ ຕາມຄຳສັ່ງເລກທີ 411/ ຄລສພ ແລະ ຮຽກຮ້ອງໃຫ້ສະມາຊິກພັກ ຈົ່ງເຊີດຊູຄວາມຮັບຜິດຊອບ ເພື່ອເຕົ້າໂຮມເອົາຄຳຄິດຄຳເຫັນຂອງສະມາຊິກພັກ ປະກອບໃສ່ເນື້ອໃນເອກະສານ ແລະ ບຸກຄະລາກອນ ກອງປະຊຸມໃຫຍ່ສະມາຊິກພັກ ຄັ້ງທີ III ຂອງອົງຄະນະພັກ ຄຕພ ຮັບປະກັນໃຫ້ການເລືອກຕັ້ງ ຄະນະບໍລິຫານງານພັກ ສະໄໝທີ III ມີຄຸນນະພາບ. ພ້ອມກັນນັ້ນ, ສະຫາຍ ປອ ນາງ ສູນທອນ ໄຊຍະຈັກ ກໍໄດ້ມີຄຳເຫັນຕໍ່ກອງປະຊຸມທາບທາມ ໂດຍເນັ້ນວ່າ: ການທາບທາມ ຮອບທີ 2 ມີຄວາມໝາຍສຳຄັນ ເພື່ອກ້າວໄປສູ່ກອງປະຊຸມໃຫຍ່, ສະນັ້ນ ສະມາຊິກພັກທຸກຄົນ ຕ້ອງກຳໄດ້ມາດຖານ-ເງື່ອນໄຂ ທີ່ຂັ້ນເທິງກຳນົດໄວ້ ໃຫ້ເລິກເຊິ່ງ, ການປະກອບຄຳເຫັນ ກໍໃຫ້ມີເນື້ອໃນ, ເຂົ້າກັບເປົ້າໝາຍ, ຫຼີກເວັ້ນການໃສ່ຮ້າຍປ້າຍສີທີ່ບໍ່ມີມູນຄວາມຈິງ, ເວົ້າລວມ ແມ່ນຮັບປະກັນໃຫ້ກອງປະຊຸມ ດຳເນີນໄປດ້ວຍບັນຍາກາດຟົດຟື້ນດີ.

ຈາກນັ້ນ, ສະຫາຍ ປອ ສະເຫຼີມໄຊ ທະຫົງສັກ, ກຳມະການຄະນະພັກ, ຫົວໜ້າອະນຸກຳມະການເນື້ອໃນ ໄດ້ຂຶ້ນນຳສະເໜີຮ່າງລາຍງານການເມືອງ ກໍຄື ການຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ສະມາຊິກພັກ ຄັ້ງທີ II ຂອງ ອົງຄະນະພັກ ຄຕພ ໃນໄລຍະ 5 ປີຜ່ານມາ (2021-2025), ແຜນພັດທະນາ ຄຕພ ໄລຍະ 2026-2030 ແລະ  ສະຫາຍ ປອ ວາລະໄຊ ເລັ່ງສະຫວັດ, ຮອງເລຂາຄະນະພັກ, ຮອງຫົວໜ້າ ຄຕພ ໄດ້ຜ່ານຮ່າງບົດສຳຫຼວດການນຳພາຂອງຄະນະບໍລິຫານງານພັກ ຄຕພ, ຊຶ່ງສະຫາຍ ໄດ້ຍົກໃຫ້ເຫັນດ້ານດີ, ຂໍ້ຄົງຄ້າງ, ບົດຮຽນທີ່ຖອດ ຖອນໄດ້ຕະຫຼອດການນຳພາ-ຊີ້ນຳຂອງຄະນະບໍລິຫານງານພັກ ຄຕພ 5 ປີ ຜ່ານມາ; ສ່ວນຜູ້ເຂົ້າຮ່ວມ ກໍໄດ້ປະກອບຄຳຄິດເຫັນໃສ່ 03 ເອກະສານດັ່ງກ່າວ ເພື່ອຄວາມຄົບຖ້ວນສົມບູນຍິ່ງຂຶ້ນ. ໃນຕອນທ້າຍ, ກອງປະຊຸມສອງວັນດັ່ງກ່າວ ໄດ້ດຳເນີນການທາບທາມເອົາບຸກຄະລາກອນຮອບ 1 ແລະ ຮອບ 2 ເພື່ອກະກຽມໃຫ້ແກ່ການດຳເນີນກອງປະຊຸມໃຫຍ່ສະມາຊິກພັກ ຄັ້ງທີ III ຂອງອົງຄະນະພັກ ຄຕພ ທີ່ຈະຈັດຂຶ້ນໃນຕໍ່ໜ້ານີ້.

**3) ຮັກສາການຫົວໜ້າ ຄຕພ ຕ້ອນຮັບບັນດາທູດລາວ ເຂົ້າຢ້ຽມຂໍ່ານັບ**



ໃນວັນທີ 07 ສິງຫາ 2025, ທ່ານ ບຸນເຫຼືອ ພັນດານຸວົງ, ຮັກສາການຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ ໄດ້ຕ້ອນຮັບການເຂົ້າຢ້ຽມຂໍ່ານັບຂອງ ທ່ານ ພູໂຂງ ສີສຸລາດ, ເອກອັກຄະລັດຖະທູດແຕ່ງຕັ້ງ ແຫ່ງ ສປປ ລາວ ປະຈຳ ສະຫະລັດ ອາເມຣິກາ ແລະ ທ່ານ ກາລະມຸງຄຸນ ສຸພານຸວົງ, ເອກອັກຄະລັດຖະທູດແຕ່ງຕັ້ງ ແຫ່ງ ສປປ ລາວ ປະຈຳ ສາທາລະນະລັດ ຝຣັ່ງ ທັງເປັນ ຜູ້ຕາງໜ້າຖາວອນ ແຫ່ງ ສປປ ລາວ ປະຈຳ ອົງການຝຣັ່ງໂກໂຟນີ.

ໂອກາດດັ່ງກ່າວ, ທ່ານ ບຸນເຫຼືອ ພັນດານຸວົງ ໄດ້ສະແດງຄວາມຍິນດີ ແລະ ຊົມເຊີຍ ຕໍ່ບັນດາທ່ານທູດທີ່ໄດ້ຮັບການແຕ່ງຕັ້ງໃຫ້ດຳລົງຕຳແໜ່ງອັນມີກຽດ ແລະ ສຳຄັນໃນຄັ້ງນີ້. ພ້ອມດຽວກັນນັ້ນ, ທ່ານຍັງ ເນັ້ນຢ້ຳໃຫ້ບັນດາທ່ານທູດ ຈົ່ງພ້ອມກັນສືບຕໍ່ຊຸກຍູ້ການພົວພັນທັງດ້ານພັກ ແລະ ດ້ານລັດ ລວມທັງ ການຮ່ວມມືໃນຂົງເຂດຕ່າງໆ ທີ່ໄດ້ຈັດຕັ້ງປະຕິບັດໃນໄລຍະຜ່ານມາ ໂດຍສະເພາະ ວຽກງານການທູດປະຊາຊົນ ກໍຄື ການພົວພັນຄົນເຊື້ອຊາດລາວ ຢູ່ຕ່າງປະເທດ ໃຫ້ໄດ້ຮັບການເສີມຂະຫຍາຍ ແລະ ມີໝາກຜົນຢ່າງຕໍ່ເນື່ອງ. ພ້ອມນັ້ນ, ກໍໄດ້ອວຍພອນໃຫ້ບັນດາທ່ານທູດ ຈົ່ງເດີນທາງດ້ວຍຄວາມສະຫວັດດີພາບ ແລະ ປະສົບຜົນສຳເລັດໃນການປະຕິບັດໜ້າທີ່ການທູດ ໃນຄັ້ງນີ້.

ທ່ານ ພູໂຊງ ສີສຸລາດ ໄດ້ຕາງໜ້າສະແດງຄວາມຂອບໃຈຕໍ່ ທ່ານ ບຸນເຫຼືອ ພັນດານຸວົງ ທີ່ໃຫ້ກຽດຕ້ອນຮັບຢ່າງອົບອຸ່ນ ພ້ອມທັງໃຫ້ຄຳໝັ້ນສັນຍາວ່າ ຈະນຳເອົາທິດຊີ້ນຳຂອງທ່ານ ໄປຈັດຕັ້ງປະຕິບັດເຂົ້າໃນວຽກງານການທູດຂອງຕົນ ໂດຍການສຸມກຳລັງ, ເຫື່ອແຮງ ແລະ ສະຕິປັນຍາ ເພື່ອໃຫ້ວຽກງານໄດ້ຮັບຜົນສຳເລັດ ແລະ ຖືກຕ້ອງຕາມແນວທາງນະໂຍບາຍການຕ່າງປະເທດຂອງ ສປປ ລາວ.

**4) ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ ຢ້ຽມຢາມ ແລະ ເຮັດວຽກຢູ່ ສປ ຈີນ**



ໃນຕອນເຊົ້າວັນທີ 19 ສິງຫາ 2025, ສະຫາຍ ບຸນເຫຼືອ ພັນດານຸວົງ, ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ ປປ ລາວ ໄດ້ເຂົ້າຢ້ຽມຂໍ່ານັບ ສະຫາຍ ຫຼີ ຊູເຫຼີຍ, ກຳມະການກົມການເມືອງ, ເລຂາທິການສູນກາງພັກ, ຫົວໜ້າຄະນະໂຄສະນາສູນກາງພັກກອມມູນິດຈີນ ຢູ່ ຫໍສະພາປະຊາຊົນທົ່ວປະເທດຈີນ ໃນໂອກາດທີ່ນຳພາຄະນະ ເດີນທາງໄປຢ້ຽມຢາມ ແລະ ເຮັດວຽກ ຢູ່ ສປ ຈີນ ແຕ່ວັນທີ 18-21 ສິງຫາ 2025.

ສະຫາຍ ຫຼີ ຊູເຫຼີຍ ໄດ້ສະແດງຄວາມຕ້ອນຮັບ ແລະ ຕີລາຄາສູງຕໍ່ການນຳພາອັນໜັກແໜ້ນຂອງ ພັກ ປປ ລາວ ທີ່ໄດ້ນຳພາປະຊາຊົນລາວບັນດາເຜົ່າ ຍາດໄດ້ຜົນສຳເລັດໃນການປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດຕະຫຼອດໄລຍະຜ່ານມາ, ໂດຍສະເພາະແມ່ນການຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ ຄັ້ງທີ XI ຂອງພັກ ປປ ລາວໄລຍະທ້າຍສະໄໝ ແລະ ອວຍພອນໃຫ້ການກະກຽມດຳເນີນກອງປະຊຸມໃຫຍ່ ຄັ້ງທີ XII ຂອງພັກ ປປ ລາວ ໃນຕົ້ນປີ 2026 ຈົ່ງປະສົບຜົນສຳເລັດຢ່າງຈົບງາມ; ພ້ອມນີ້ ໄດ້ສະແດງຄວາມຊົມເຊີຍ ຕໍ່ການປະສານສົມທົບກັນ ລະຫວ່າງສອງຄະນະພົວພັນຕ່າງປະເທດສູນກາງພັກ, ເປັນການປະກອບສ່ວນເຂົ້າໃນການເພີ່ມພູນຄູນສ້າງ ສາຍພົວພັນມິດຕະພາບອັນເປັນມູນເຊື້ອ ຈີນ-ລາວ ກໍ່ຄື ການຈັດຕັ້ງປະຕິບັດແຜນແມ່ບົດ ວ່າດ້ວຍການສ້າງຄູ່ຮ່ວມຊາຕາກຳ ຈີນ-ລາວ ໃຫ້ນັບມື້ມີປະສິດທິຜົນ, ຄຸນນະພາບ ແລະ ລະດັບສູງກວ່າເກົ່າ. ນອກນັ້ນ, ຍັງໄດ້ມີຄຳເຫັນແລກປ່ຽນ ກ່ຽວກັບ ທິດທາງແຜນການຮ່ວມມື ລະຫວ່າງ ສອງພັກ, ສອງລັດ ລາວ-ຈີນ ໃນຕໍ່ໜ້າ, ໂດຍສະເພາະ ແມ່ນການກະກຽມຈັດກອງປະຊຸມສຳມະນາທິດສະດີ 2 ພັກ ລາວ-ຈີນ ຄັ້ງທີ 13 ທີ່ ນະຄອນຫຼວງວຽງຈັນ ໃນທ້າຍປີ 2025 ນີ້ ແລະ ວຽກອື່ນໆ.

ໂດຍປະຕິບັດຕາມແຜນການຮ່ວມມືປະຈຳປີ ລະຫວ່າງ ຄະນະພົວພັນຕ່າງປະເທດສູນກາງພັກ ປປ ລາວ ແລະ ຄະນະພົວພັນຕ່າງປະເທດສູນກາງພັກກອມມູນິດຈີນ, ສະຫາຍ ບຸນເຫຼືອ ພັນດານຸວົງ, ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ ປປ ລາວ ໄດ້ນຳພາຄະນະ ເດີນທາງໄປຢ້ຽມຢາມ ແລະ ເຮັດວຽກ ຢູ່ ສປ ຈີນ ແຕ່ວັນທີ 18-21 ສິງຫາ 2025 ເພື່ອຮ່ວມກັນກັບຝ່າຍຈີນ ປຶກສາຫາລື-ແລກປ່ຽນຄຳຄິດເຫັນ ກ່ຽວກັບ ທິດທາງການພົວພັນຮ່ວມມື ລະຫວ່າງ ສອງພັກ, ສອງລັດ ແລະ ສອງ ຄະນະພົວພັນຕ່າງປະເທດສູນກາງພັກ ລາວ-ຈີນ ໃນຕໍ່ໜ້າ.

ໃນວັນທີ 18 ສິງຫາ 2025, ສະຫາຍ ບຸນເຫຼືອ ພັນດານຸວົງ ໄດ້ພົບປະເຮັດວຽກກັບ ສະຫາຍ ເສິນ ໂຈ, ຮອງຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກກອມມູນິດຈີນ, ສອງຄະນະພົວພັນຕ່າງປະເທດສູນກາງພັກ ລາວ-ຈີນ, ໄດ້ຮ່ວມກັນຕີລາຄາຄືນ ສະພາບລວມການຈັດຕັ້ງປະຕິບັດ ແຜນການຮ່ວມມື ລະຫວ່າງ ສອງພັກ ສະບັບປີ 2021-2025 ທີ່ສອງຝ່າຍ ຮ່ວມກັນເປັນເສນາທິການຕິດຕາມຊຸກຍູ້, ອຳນວຍຄວາມສະດວກໃຫ້ແກ່ສູນກາງພັກ ແລະ ບັນດາອົງການອ້ອມຂ້າງສູນກາງພັກ ລາວ-ຈີນ ຈັດຕັ້ງປະຕິບັດແຜນການຮ່ວມມືດັ່ງກ່າວ; ປຶກສາຫາລື ແລະ ເຫັນດີເປັນເອກະພາບກັນຢ່າງກວ້າງຂວາງ ກ່ຽວກັບ ທິດທາງໃນການຮ່ວມກັນຕິດຕາມຊຸກຍູ້ ການຈັດຕັ້ງປະຕິບັດ ແຜນແມ່ບົດວ່າດ້ວຍການສ້າງຄູ່ຮ່ວມຊາຕາກຳ ລາວ-ຈີນ, ການຮ່ວມມືສອງຝ່າຍໃນຕໍ່ໜ້າ ແລະ ໄດ້ແລກປ່ຽນທັດສະນະ ກ່ຽວກັບສະພາບການພາກພື້ນ ແລະ ສາກົນ ທີ່ສອງຝ່າຍມີຄວາມສົນໃຈຈຳນວນໜຶ່ງ.

ໃນການຢ້ຽມຢາມ-ເຮັດວຽກຄັ້ງນີ້, ສະຫາຍ ບຸນເຫຼືອ ພັນດານຸວົງ ພ້ອມດ້ວຍຄະນະ ຍັງໄດ້ເດີນທາງໄປຢ້ຽມຢາມນະຄອນຊຽງຮຸ່ງ, ກິ່ງແຂວງສິບສອງພັນນາ, ແຂວງຢຸນນານ, ໂດຍໄດ້ພົບປະກັບ ສະຫາຍ ສູ ຮ້າວ, ຮອງເຈົ້າແຂວງຢຸນນານ, ພ້ອມນີ້ ຄະນະຍັງໄດ້ໄປທັດສະນະສຶກສາພື້ນຖານທາງດ້ານວັດທະນະທຳ, ການພັດທະນາເສດຖະກິດ-ສັງຄົມ ຢູ່ ນະຄອນຊຽງຮຸ່ງ ແລະ ຊຸກຍູ້ວຽກງານກ່ຽວຂ້ອງ ຢູ່ ດ່ານສາກົນ ບໍ່ເຕ່ນ-ບໍ່ຫານ, ຊາຍແດນ ລາວ-ຈີນ ກ່ອນຈະເດີນທາງກັບຄືນປະເທດອີກດ້ວຍ.




**5) ຫົວໜ້າ ຄະນະພົວພັນຕ່າງປະເທດສູນກາງພັກ ຕ້ອນຮັບການເຂົ້າຢ້ຽມຂໍ່ານັບອຳລາ ຂອງເອກອັກຄະລັດຖະທູດແຫ່ງ ສ. ຝຣັ່ງ ປະຈຳ ສປປ ລາວ**



ໃນວັນທີ 26 ສິງຫາ 2025, ທີ່ ສຳນັກງານຄະນະພົວພັນຕ່າງປະເທດສູນກາງພັກ, ທ່ານ ບຸນເຫຼືອ ພັນດານຸວົງ, ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ ໄດ້ຕ້ອນຮັບການເຂົ້າຢ້ຽມຂໍ່ານັບອຳລາຂອງ ທ່ານ ນາງ ຊິວ-ແລັງ ຊູອອກ (Siv-Leng CHHUOR), ເອກອັກຄະລັດຖະທູດວິສາມັນຜູ້ມີອຳນາດເຕັມ ແຫ່ງ ສ. ຝຣັ່ງ ປະຈຳ ສປປ ລາວ.

ໃນໂອກາດດັ່ງກ່າວ, ທ່ານ ບຸນເຫຼືອ ພັນດານຸວົງ ໄດ້ສະແດງຄວາມຊົມເຊີຍ ແລະ ຕີລາຄາສູງ ຕໍ່ຜົນສຳເລັດໃນການປະຕິບັດໜ້າທີ່ການທູດ ຢູ່ ສປປ ລາວ ເປັນໃນໄລຍະເວລາເກືອບ 04 ປີຜ່ານມາ, ຊຶ່ງທ່ານທູດໄດ້ປະກອບສ່ວນຢ່າງ

ຫ້າວຫັນ ໃນການຊຸກຍູ້ສົ່ງເສີມການພົວພັນຮ່ວມມື ລະຫວ່າງ ສ. ຝຣັ່ງ ແລະ ສປປ ລາວ ໃຫ້ມີຄວາມແໜ້ນແຟ້ນ ແລະ ເຕີບໃຫຍ່ຂະຫຍາຍຕົວເປັນກ້າວໆ. ພ້ອມນີ້, ກໍໄດ້ສະແດງຄວາມຂອບໃຈຕໍ່ການສະໜັບສະໜູນຊ່ວຍເຫຼືອຈາກ ປະຊາຊົນ ແລະ ລັດຖະບານຝຣັ່ງ ໃນໄລຍະຜ່ານມາ ໂດຍສະເພາະແມ່ນ ອົງການຝຣັ່ງເພື່ອການພັດທະນາ, ຊຶ່ງໄດ້ປະກອບສ່ວນສຳຄັນເຂົ້າໃນການສ້າງສາພັດທະນາ ສປປ ລາວ ແລະ ໄດ້ອວຍພອນ ທ່ານ ນາງ Siv-Leng CHHUOR ຈົ່ງເດີນທາງກັບປະເທດ ດ້ວຍຄວາມສະຫວັດດີພາບ ແລະ ສືບຕໍ່ປະຕິບັດໜ້າທີ່ໃໝ່ໃນຕໍ່ໜ້າ ໃຫ້ໄດ້ຮັບຜົນສຳເລັດເປັນຢ່າງດີ.

6) **ສະຫາຍຮອງຫົວໜ້າ ຄະນະພົວພັນຕ່າງປະເທດສູນກາງພັກ ເຂົ້າອວຍພອນ ເອກອັກຄະລັດຖະທູດ ແຫ່ງ ສສ ຫວຽດນາມ ປະຈຳ ສປປ ລາວ**




ໃນຕອນເຊົ້າວັນທີ 20 ສິງຫາ 2025, ຄະນະພັກ-ຄະນະນຳ ຄະນະພົວພັນຕ່າງປະເທດສູນກາງພັກປະຊາຊົນປະຕິວັດລາວ ນຳໂດຍ ສະຫາຍ ວາລະໄຊ ເລັ່ງສະຫວັດ, ຮອງຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ ປະຊາຊົນປະຕິວັດລາວ ໄດ້ເຂົ້າອວຍພອນ ເອກອັກຄະລັດຖະທູດ, ພະນັກງານສະຖານທູດ ສສ ຫວຽດນາມ ແລະ ຫ້ອງການຜູ້ຕາງໜ້າ ສສ ຫວຽດນາມ ປະຈຳ ສປປ ລາວ ໃນໂອກາດວັນລະນຶກການປະຕິວັດເດືອນສິງຫາ (19/8/1945–19/8/2025) ແລະ ວັນສະຖາປະນາ ສສ ຫວຽດນາມ (2/9/1945–2/9/2025) ຄົບຮອບ 80 ປີ.

ສະຫາຍ ວາລະໄຊ ເລັ່ງສະຫວັດ ໄດ້ສະແດງຄວາມຊົມເຊີຍ ແລະ ຕີລາຄາສູງ ຕໍ່ບັນດາຜົນສຳເລັດ ແລະ ຜົນງານທີ່ໃຫຍ່ຫຼວງ, ຮອບດ້ານຂອງປະຊາຊົນ ຫວຽດນາມ ຍາດມາໄດ້ຕະຫຼອດໄລຍະ 80 ປີ ຜ່ານມາ, ພາຍໃຕ້ການນຳພາອັນປີຊາສາມາດ ແລະ ຖືກຕ້ອງສະຫຼາດສ່ອງໃສຂອງ ພັກກອມມູນິດຫວຽດນາມ ອັນໄດ້ເຮັດໃຫ້ ສສ ຫວຽດນາມ ສືບຕໍ່ມີສະຖຽນລະພາບ ທາງດ້ານການເມືອງ ຢ່າງໜັກແໜ້ນ, ສັງຄົມມີຄວາມເປັນລະບຽບຮຽບຮ້ອຍ, ການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ມີຄວາມໝັ້ນທ່ຽງເຂັ້ມແຂງ, ເສດຖະກິດມີການຂະຫຍາຍຕົວດ້ວຍຈັງຫວະໄວ ແລະ ຕໍ່ເນື່ອງ, ຊີວິດການເປັນຢູ່ຂອງປະຊາຊົນ ສືບຕໍ່ໄດ້ຮັບການປັບປຸງດີຂຶ້ນເລື້ອຍໆ, ການພົວພັນຮ່ວມມືກັບຕ່າງປະເທດ ໄດ້ຮັບການເປີດກວ້າງ, ຖານະບົດບາດອິດທິພົນຂອງ ພັກກອມມູນິດຫວຽດນາມ ແລະ ສສ ຫວຽດນາມ ນັບມື້ນັບສູງເດັ່ນຂຶ້ນໃນເວທີພາກພື້ນ ແລະ ສາກົນ.

ສະຫາຍ ວາລະໄຊ ເລັ່ງສະຫວັດ ຍັງໄດ້ສະແດງຄວາມເອກອ້າງທະນົງໃຈ ເປັນຢ່າງຍິ່ງທີ່ເຫັນວ່າ ສາຍພົວພັນມິດຕະພາບອັນຍິ່ງໃຫຍ່, ຄວາມສາມັກຄີພິເສດ ແລະ ການຮ່ວມມືຮອບດ້ານ ລະຫວ່າງ ສອງພັກ, ສອງລັດ ແລະ ປະຊາຊົນສອງຊາດ ລາວ-ຫວຽດນາມ ທີ່ໄດ້ຮັບການກໍ່ຕັ້ງໂດຍ ປະທານ ໂຮ່ຈີມິນ ຜູ້ຍິ່ງໃຫຍ່, ປະທານ ໄກສອນ ພົມວິຫານ ແລະ ປະທານ ສຸພານຸວົງ ຜູ້ນຳແສນເຄົາລົບຮັກ ເປັນຜູ້ກໍ່ຕັ້ງ ແລະ ໄດ້ຮັບການຖະນຸຖະໜອມ ແລະ ເພີ່ມພູນຄູນສ້າງ ຈາກບັນດາຮຸ່ນການນຳ ຂອງສອງປະເທດ ສືບຕໍ່ໄດ້ຮັບການເສີມສ້າງຂຶ້ນຢ່າງບໍ່ຢຸດຢັ້ງ ແລະ ນັບມື້ກ້າວເຂົ້າສູ່ລວງເລິກ ໃນທຸກຂົງເຂດວຽກງານ, ນຳເອົາຜົນປະໂຫຍດຕົວຈິງ ມາສູ່ປະຊາຊົນສອງຊາດ ລາວ-ຫວຽດນາມ. ຕີລາຄາສູງ ແລະ ຊົມເຊີຍການປະຕິບັດໜ້າທີ່ຂອງ ສະຖານທູດຫວຽດນາມ ປະຈຳ ສປປ ລາວ ທີ່ໄດ້ເຮັດໜ້າທີ່ເປັນຂົວ

ຕໍ່ ແລະ ເປັນເສນາທິການທີ່ດີໃຫ້ແກ່ ການພົວພັນ ສອງປະເທດ ຕະຫຼອດໄລຍະທີ່ຜ່ານມາ. ສະແດງຄວາມຍິນດີຮ່ວມກັບ ສະຖານທູດ ແລະ ພາກສ່ວນກ່ຽວຂ້ອງຂອງ ຫວຽດນາມ ໃນການຊຸກຍູ້ການພົວພັນຮ່ວມມືຂອງ ສອງປະເທດ ໃຫ້ມີປະສິດທິຜົນກວ່າເກົ່າ. ສະແດງຄວາມຂອບໃຈຕໍ່ ພັກ, ລັດ ແລະ ປະຊາຊົນ ຫວຽດນາມ ອ້າຍນ້ອງ ທີ່ໃຫ້ສະໜັບສະໜູນຊ່ວຍເຫຼືອຕໍ່ການປະຕິວັດລາວ ໃນພາລະກິດປົດປ່ອຍຊາດໃນເມື່ອກ່ອນ ກໍຄື ໃນພາລະກິດສ້າງສາ ແລະ ພັດທະນາປະເທດຊາດ ໃນປັດຈຸບັນ.

**7) ເວທີສຳມະນາວິທະຍາສາດ ພາຍໃຕ້ຫົວຂໍ້ "ການມີສ່ວນຮ່ວມຂອງປະເທດມະຫາອຳນາດ ແລະ ປະເທດໃຫຍ່ ຕໍ່ສະພາບການເດັ່ນຂອງໂລກ**





ໃນຕອນບ່າຍຂອງວັນທີ 21 ສິງຫາ 2025, ຄະນະບໍລິຫານງານຊາວໜຸ່ມ ຄຕພ ຮ່ວມກັບ ອະນຸກຳມະການຂະບວນການກະກຽມປະຊຸມໃຫຍ່ສະມາຊິກພັກຂອງອົງຄະນະພັກ ຄຕພ ຄັ້ງທີ III ໄດ້ຈັດເວທີສຳມະນາວິທະຍາສາດ ພາຍໃຕ້ຫົວຂໍ້ **"ການມີສ່ວນຮ່ວມຂອງປະເທດມະຫາອຳນາດ ແລະ ປະເທດໃຫຍ່ ຕໍ່ສະພາບການເດັ່ນຂອງໂລກ ໂດຍສະເພາະພາກພື້ນອາຊີ"**. ໃຫ້ກຽດເຂົ້າຮ່ວມເວທີສຳມະນາດັ່ງກ່າວ ມີ ທ່ານ ວາລະໄຊ ເລັ່ງສະຫວັດ, ຮອງເລຂາຄະນະບໍລິຫານງານພັກ, ຮອງຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ; ທ່ານ ທູດໄຊຍະການ ສີສຸວົງ, ປະທານສະໂມສອນນັກການທູດລາວ ແລະ ທ່ານ ທູດ ຂຽນ ພັນສຸຣິວົງ ຈາກສະໂມສອນນັກການທູດລາວ. ນອກນັ້ນ, ຍັງມີ ຄະນະກົມ, ຄະນະພະແນກ, ຄະນະບໍລິຫານງານ ແລະ ສະມາຊິກ 3 ອົງການຈັດຕັ້ງພາຍໃນ ຄຕພ ເຂົ້າຮ່ວມ.

ໃນເວທີສຳມະນາ, ທ່ານ ທູດ ໄຊຍະການ ສີສຸວົງ, ປະທານສະໂມສອນນັກການທູດລາວ ແລະ ທ່ານ ທູດ ຂຽນ ພັນສຸຣິວົງ, ຈາກສະໂມສອນນັກການທູດລາວ ແລະ ທ່ານ ສິງຫານະຄອນ ສີຫາລາດ ໄດ້ມີຄຳເຫັນແລກປ່ຽນຂໍ້ມູນ ແລະ ຖ່າຍທອດບົດຮຽນ ຕໍ່ສະພາບການເດັ່ນຂອງໂລກ ໂດຍສະເພາະພາກພື້ນອາຊີ. ນອກນັ້ນ, ຜູ້ເຂົ້າຮ່ວມ ຍັງໄດ້ປະກອບຄຳເຫັນແລກປ່ຽນ ແລະ ຕັ້ງຄຳຖາມແລກປ່ຽນກັບວິທະຍາກອນທັງ 3 ທ່ານ ຊຶ່ງເຫັນວ່າ ບັນຍາກາດຂອງເວທີສຳມະນາຄັ້ງນີ້ ດຳເນີນໄປດ້ວຍບັນຍາກາດຟົດຟື້ນ.